PA
ລົງ ກະ ຈາຍ ຕໍ່.
26/7/2017

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 26 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 24 ກໍລະກົດ 2017

ສຳນັກງານ ຄຄຊ
...0794...
25 JUL 2017
021 217770

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 03-07/07/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,09% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສະຫະລັດອາເມລິກາອອກມາບໍ່ດີ ເປັນຕົ້ນແມ່ນດຸນການຄ້າຂອງສະຫະລັດອາເມລິກາ ໃນເດືອນ 5/2017 ຍັງສືບຕໍ່ຂາດດຸນຢູ່ທີ່ລະດັບ 46,5 ຕື້ໂດລາສະຫະລັດ ເມື່ອທຽບໃສ່ເດືອນຜ່ານມາ ແລະ ບວກກັບຕົວເລກຍອດການສັ່ງຊື້ສິນຄ້າທີ່ຜະລິດຈາກໂຮງງານ ຫຼຸດລົງ 0,08% ຂອງເດືອນ 5/2017 ຈາກຫຼຸດລົງ 0,03% ໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 26-30/06/2017 | ອາທິດນີ້ 03-07/07/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1409 | 1,1419 | -0,09% |
| ເຢນ/ໂດລາ | 111,96 | 113,65 | -1,49% |
| ບາດ/ໂດລາ | 33,95 | 34,07 | -0,35% |
| ເປໂຊ/ໂດລາ | 50,44 | 50,61 | -0,33% |
| ຣູເປັຍ/ໂດລາ | 13.325 | 13.402 | -0,57% |
| ໂດລາສິງກະໂປ/ໂດລາ | 1,3760 | 1,3818 | -0,42% |
| ຢວນ/ໂດລາ | 6,7779 | 6,7990 | -0,31% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 2,03% ຈາກ 46,28 ໂດລາ/ບາເຣວ ມາເປັນ 45,34 ໂດລາ/ບາເຣວ ພາຍຫຼັງກຸ່ມໂອເປັກໄດ້

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

ເພີ່ມປະລິມານການສົ່ງອອກນ້ຳມັນດິບ ໃນເດືອນ 06/2017 ເພີ່ມຂຶ້ນ 0,45 ລ້ານບາເຣວ/ວັນ ມາເປັນ 25,92 ລ້ານບາເຣວ/ວັນ ທຽບໃສ່ເດືອນຜ່ານມາ[2];

- ສຳລັບລາຄາຄຳຫຼຸດລົງ 1,72% ຈາກ 1.243,21 ໂດລາ/ອອນ ມາເປັນ 1.221,80 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,01% ແລະ ແຂງຄ່າຂຶ້ນ 0,18% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 2,57% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 7,84% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 26-30/06/2017 | | | ອາທິດນີ້ 03-07/07/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[3] | | | | | | | | | | | | |
| ໂດລາ | 8.385,62 | 8.407,54 | 8.393,86 | 8.383,72 | 8.409,12 | 8.392,68 | 0,02% | -0,02% | 0,01% | -2,77% | -2,40% | -2,57% |
| ບາດ | 248,16 | 248,75 | 248,48 | 247,76 | 248,32 | 248,03 | 0,16% | 0,17% | 0,18% | -8,11% | -7,79% | -7,84% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,63% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 27,96%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,65% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,47%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (30/06/-06/07/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 31,40 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 59,45 ລ້ານໂດລາ ແລະ ຂາຍໂດລາໄດ້ 28,05 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.626,16 ລ້ານບາດ (ໃນນີ້ ຊື້ບາດໄດ້ 204,62 ລ້ານບາດ ແລະ ຂາຍບາດໄດ້ 1.830,78 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 29,63% ແລະ ເງິນບາດຫຼຸດລົງ 3,30%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 7,80 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 205 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,62 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 25,49 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາສຸດທິ ຈຳນວນ 0,16 ລ້ານໂດລາ ແລະ ເງິນບາດຈຳນວນ 1,67 ລ້ານບາດ.

---

[2] ແຫຼ່ງທີ່ມາຂອງຂໍ້ມູນ: https://www.thaioilgroup.com

[3] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 23-29/06/2017 | | ອາທິດທີ 30/06/-06/07/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **66,50** | **285,22** | **59,45** | **204,62** | **-10,60%** | **-28,26%** |
| - ທ/ຄທຸລະກິດລັດ | 7,43 | 37,70 | 9,09 | 56,52 | 22,34% | 49,92% |
| - ທ/ຄທຸລະກິດອື່ນໆ | 59,07 | 247,52 | 50,36 | 148,10 | -14,75% | -40,17% |
| **2. ການຂາຍເງິນຕາຕ່າງປະເທດ** | **57,84** | **1.819,68** | **28,05** | **1.830,78** | **-51,50%** | **0,61%** |
| - ທ/ຄທຸລະກິດລັດ | 44,91 | 121,20 | 15,34 | 232,65 | -65,84% | 91,96% |
| - ທ/ຄທຸລະກິດອື່ນໆ | 12,93 | 1.698,48 | 12,71 | 1.598,13 | -1,70% | -5,91% |
| **ຊື້-ຂາຍສຸດທິ ທທກ** | **8,66** | **-1.534,46** | **31,40** | **-1.626,16** | **262,59%** | **5,98%** |
| - ຜິດດ່ຽງ ຊື້-ຂາຍ | 13,02% | -537,99% | 52,82% | -794,72% | 305,58% | 47,72% |
| - ມູນຄ່າການຊື້-ຂາຍ | **124,34** | **2.104,90** | **87,50** | **2.035,40** | **-29,63%** | **-3,30%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-56,30** | **-228,00** | **-7,80** | **-205,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 56,30 | 228,00 | 7,80 | 205,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,19** | **39,98** | **0,62** | **25,49** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,05** | **0,00** | **0,16** | **1,67** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,05 | 0,00 | 0,16 | 1,67 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 06/2017 ຄາດວ່າຢູ່ໃນລະດັບ 0,66% ຫຼຸດລົງຈາກ 1,07% ທຽບໃສ່ເດືອນ 05/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ຫຼຸດລົງ 344,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 45,66 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 24% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 95,18 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 707 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 172 ສະບັບ ເທົ່າກັບ 19,56% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 309,99 ຕື້ກີບ ຫຼຸດລົງ 360,34 ຕື້ກີບ ເທົ່າກັບ 54,07% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (30/06/-06/07/2017) ມີທັງໝົດ 3.029 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.991 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 24,03 ຕື້ກີບ ຈາກ 1.098,04 ຕື້ກີບ ມາເປັນ 1.074,01 ຕື້ກີບ ເທົ່າກັບ 2,18%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 38 ຄັ້ງ, ມູນຄ່າການໂອນໃນອາທິດ ຫຼຸດລົງ 29,01 ຕື້ກີບ ຈາກ 211,73 ຕື້ກີບ ມາເປັນ 182,72 ຕື້ກີບ ເທົ່າກັບ 13,70%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.021,05 ຈຸດ ເພີ່ມຂຶ້ນ 0,24% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 527.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,55 ຕື້ກີບ ເພີ່ມຂຶ້ນ 868,57% ທຽບໃສ່ອາທິດຜ່ານມາ ເນື່ອງຈາກມີການຂາຍປ່ຽນມືຂອງລູກຄ້າບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 50,85% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 26-30/06/2017 | ດັດຊະນີອາທິດທີ 03-07/07/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.018,56 | 1.021,05 | 0,24 | |

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)** (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 32.800 | 179.860.000 | 5.484 | 80.700 | 443.925.000 | 5.501 | 146,04 | 146,82 | 17 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 36.100 | 160.160.000 | 4.437 | 53.100 | 268.990.000 | 5.066 | 47,09 | 67,95 | 629 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.550 | 367.200 | 2.790.720.000 | 7.550 | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວ ມະຫາຊົນ | 7.400 | 14.100.000 | 1.905 | 26.400 | 52.680.000 | 1.995 | 256,76 | 273,62 | 90 |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 4.500 | 13.050.000 | 2.900 | - | - | 2.900 | -100,00 | -100,00 | - |
| ທັງໝົດ | 80.800 | 367.170.000 | 4.544 | 527.400 | 3.556.315.000 | 6.743 | 552,72 | 868,57 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມດຳເນີນຊີວິດການເມືອງປົວແປງພັກຂອງ ທຫລ ໃນປີ 2017 ຢ່າງຈົບງາມ;
- ສຳເລັດການເຊັນຮັບຮອງເອົາບົດລາຍງານກ່ຽວກັບຜົນການກວດກາຂອງທະນາຄານທຸລະກິດ;
- ສຳເລັດການຄົ້ນຄວ້າກ່ຽວກັບການສະເໜີຂອງທະນາຄານທຸລະກິດ ເປັນຕົ້ນ: ການຂໍອະນຸຍາດນຳໃຊ້ທຶນຈົດທະ

ບຽນ, ການຂໍອະນຸຍາດກູ້ຢືມເງິນ, ການສົ່ງເສີມຜະລິດຕະພັນດ້ວຍຮູບການແຈກລາງວັນແລະ ການຂໍອະນຸຍາດອອກໜັງສືຄໍ້າປະກັນສັນຍາ;

- ສໍາເລັດການປຶກສາຫາລືການເຮັດວຽກຮ່ວມກັນລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານໂລກ ກ່ຽວກັບການຮ່າງແຜນຍຸດທະສາດໃນການພັດທະນາລະບົບ IT ຂອງ ທຫລ;

- ສໍາເລັດການກະກຽມຄວາມພ້ອມຕ່າງໆ ເພື່ອກະກຽມໃຫ້ແກ່ການເປີດກອງປະຊຸມການປະເມີນຄວາມສ່ຽງລະດັບຊາດຂອງວຽກງານ AML/CFT;

- ສໍາເລັດການຕ້ອນຮັບການຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ຄະນະຜູ້ບໍລິຫານບໍລິສັດໂອຣາໂຄ (Oracle).

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- **ກະກຽມຈັດກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ ກະກຽມບັນດາເອກະສານຕ່າງໆທີ່ຕິດພັນກັບວຽກ ທຫລ ໃຫ້ແກ່ກອງປະຊຸມລັດຖະບານ ສະໄໝວິສາມັນ ປະຈໍາເດືອນ ກໍລະກົດ 2017 ທີ່ (ຫສນຍ); ❷ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈໍາເດືອນ ກໍລະກົດ 2017 ທີ່ (ທຫລ); ❸ ກອງປະຊຸມຄະນະປະຈໍາພັກ-ຄະນະຜູ້ວ່າການ ທຫລ ປະຈໍາເດືອນ ກໍລະກົດ 2017 ທີ່ (ທຫລ); ❹ ກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນ ຄັ້ງທີ II ປະຈໍາປີ 2017 ທີ່ (ທຫລ); ❺ ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້າຮ່າງດໍາລັດປົກປ້ອງຜູ້ບໍລິໂພກທາງດ້ານການເງິນ ທີ່ (ທຫລ); ❻ ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ແລະ ການຄຸ້ມຄອງເງິນຕາຕ່າງປະເທດທີ່ (ທຫລ); ❼ ກອງປະຊຸມຄະນະກະກຽມເຂົ້າຮ່ວມກອງປະຊຸມປະຈໍາປີຂອງກຸ່ມອາຊີປາຟິກ ເພື່ອຕ້ານການຟອກເງິນ ທີ່ (ທຫລ) ແລະ ❽ ກອງປະຊຸມປຶກສາຫາລື ກ່ຽວກັບການແກ້ໄຂບັນຫາຂອງ ບໍລິສັດພີເອັສ ທີ່ (ທຫລ);

- ກະກຽມຕ້ອນຮັບການຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ທ່ານປະທານ ແລະ ຜູ້ອໍານວຍການ ພ້ອມດ້ວຍຄະນະ ຈາກຕະຫຼາດຫຼັກຊັບ ສ. ເກົາຫຼີ;

- ກະກຽມບັນດາເນື້ອໃນຕ່າງໆໃຫ້ແກ່ການຈັດກອງປະຊຸມສະພາບໍລິຫານ;

- ກະກຽມຄວາມພ້ອມຕ່າງໆໃຫ້ແກ່ການເປີດ ທຫລ ພາກເໜືອ ທີ່ແຂວງຊຽງຂວາງ;

- ກະກຽມເດີນທາງໄປເຂົ້າຮ່ວມ ຂະບວນການແຂ່ງຂັນກິລາ ມິດຕະພາບປະຈໍາປີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ຫວຽດນາມ ທີ ສສ ຫວຽດນາມ.

**ຫົວໜ້າຫ້ອງການ**

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ